ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 030 9882809,ແຟັກ:(856-21)

ເລກທີ: 011/ລອທ

ນະຄອນຫຼວງວຽງຈັນ, 21 FEB 2025

ຮຽນ : ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອໍານວຍການໃຫຍ່ຕະຫຼາດຫລັກຊັບລາວ ຈໍາກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິສໍາຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປະຈໍາປີ 2025

- ອີງຕາມຂໍ້ຕົກລົງຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("ບໍລິສັດ" ຫຼື "ລອທ") ໄດ້ຈັດກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປະຈໍາປີ 2025 ຈັດຂຶ້ນໃນວັນທີ 21 ກຸມພາ 2025 ເວລາ 10:00 ໂມງ ຢູ່ທີ່ສໍານັກງານໃຫຍ່ ບໍລິສັດ ລາວອາໂກຣເທັກ ມະຫາຊົນ, ຖະໜົນ 13 ເໜືອ, ບ້ານໜອງຄັນຄູ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ ໃຫ້ກຽດເປັນປະທານໂດຍ ທ່ານ ອະພິສິດ ຮຸຈິກຽດກໍາຈອນ ປະທານສະພາບໍລິຫານ.

ລາຍຊື່ສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ

1.	ທ່ານ ອະພິສິດ	ຮຸຈິກຽດກໍາຈອນ	ປະທານສະພາບໍລິຫານ
2.	ທ່ານ ນາງ ຄໍາແພງ	ພັດທະດາວົງ	ຮອງປະທານສະພາບໍລິຫານ
3.	ທ່ານ ເສດ	ພັດທະນະມາດ	ສະມາຊິກສະພາບໍລິຫານ/ຜູ້ອໍານວຍການ
4.	ທ່ານ ພົງຖານ	ພິດຈໍານົງ	ສະມາຊິກສະພາບໍລິຫານ
5.	ທ່ານ ນາງ ດວງສະໄໝ	ເລົ່າຝຸງ	ສະມາຊິກສະພາບໍລິຫານ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 01 ປະຈຳປີ 2025 ໂດຍມີລາຍລະອຽດດັ່ງລຸ່ມນີ້:

1. ມະຕິເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານ ຄັ້ງທີ 04 ປະຈຳປີ 2024.
2. ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2024 ຈາກບໍລິສັດຜູ້ກວດສອບພາຍນອກ ເພື່ອສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ.
3. ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາ.
4. ຮັບຮອງເອົາການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດປະຈຳປີ 2024 ເນື່ອງຈາກບໍລິສັດຂາດທຶນຈາກການດຳເນີນທຸລະກິດ ແລະ ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາ.
5. ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດແຕ່ງຕັ້ງ ຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2025.
6. ເຫັນດີມອບອຳນາດໃຫ້ ທ່ານ ເສດ ພັດທະນະມາດ ຜູ້ອຳນວຍການໃຫຍ່ບໍລິສັດ ເປັນຜູ້ມີອຳນາດໃນການກຳນົດລາຍລະອຽດ ແລະ ເງື່ອນໄຂຕ່າງໆ ກ່ຽວກັບການກະກຽມຈັດກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2024 ໄດ້ທຸກປະການລວມທັງການກະກຽມເອກະສານຕ່າງໆ ແລະ ດຳເນີນການໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.
7. ຮັບຮອງການກະກຽມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024 ດັ່ງນີ້:
   - ກຳນົດເອົາວັນທີ 12 ມີນາ 2025 ເປັນວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອການົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024.
   - ກຳນົດເອົາວັນທີ 28 ເມສາ 2025, ເວລາ 14:30ນ ເປັນວັນຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024 ໂດຍກຳນົດວາລະກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024 ຄື:
     1. ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກອງປະຊຸມຜູ້ຖືຮຸ້ນປະຈຳປີ 2023.
     2. ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2024 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2024.
     3. ພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດ ປະຈຳປີ 2025.
     4. ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2024.
     5. ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2025.
     6. ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ.
     7. ເລື່ອງອື່ນໆ (ຖ້າມີ).

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ

ດ້ວຍຄວາມນັບຖືເປັນຢ່າງສູງ

ຜູ້ອຳນວຍການໃຫຍ່



ປອ. ເສດ ພັດທະນະມາດ